# 1. ການລ້ຽງສັດປີກ

ການລ້ຽງສັດປີກຫຼາຍໆຊະນິດລວມກັນ ມັນເປັນວິທີການລ້ຽງທີ່ບໍ່ເໝາະສົມ ແລະບໍ່ຖືກຕ້ອງຕາມຫຼັກການຖ້າເຮົາລ້ຽງສັດປີກປະເພດຕ່າງໆແບບປະປ່ອຍສະຊາຍ ແລະຊອກກິນອາຫານ ແລະນ້ຳຕາມລຳພັງເຮົາບໍ່ຄວນລ້ຽງໄກ່ ແລະເປັດໃນສະຖານທີ່ດຽວກັນເຮົາຕ້ອງສ້າງຄອກໃຫ້ມັນຢູ່. ໃຫ້ອາຫານ ແລະນ້ຳທີ່ສະອາດໃຫ້ໄກ່ກິນ. ເພາະມັນຈະຊ່ວຍໃຫ້ຜົນຜະລິດດີເຊັ່ນ: ຊີ້ນ ແລະໄຂ່ເພີ່ມຂຶ້ນສັດປີກເປັນສັດທີ່ຕິດແປດພະຍາດໄດ້ງ່າຍ ແລະພະຍາດຫຼາຍຊະນິດທີ່ເຮັດໃຫ້ສັດປີກຕາຍເປັນຈຳນວນຫຼວງຫຼາຍ. ເພື່ອປ້ອງກັນບັນຫາດັ່ງກ່າວມັນມີຄວາມຈຳເປັນທີ່ສຸດ ທີ່ຈະຕ້ອງໄດ້ສັກຢາວັກຊີນ ແລະອະນາໄມຄອກໃຫ້ສະອາດຢູ່ສະເໝີ .



# 2. ວິທີການລ້ຽງໄກ່ແບບພື້ນບ້ານ

ຫຼາຍໆຊຸມຊົນລ້ຽງໄກ່ໄວ້ ເພື່ອເອົາຊີ້ນ ແລະໄຂ່ມາໃຊ້ໃນງານລ້ຽງ ແລະພິທີກິນດອງ ແລະບຸນປະເພນີຕ່າງໆ. ບາງເທື່ອກໍ່ນຳໄປຂາຍເພື່ອຫາເງິນມາຊື້ຢາ ແລະອາຫານໃນຍາມຈຳເປັນເຖິງແນວໃດກໍ່ຕາມການລ້ຽງໄກ່ຂອງປະຊາຊົນບາງຄອບຄົວຍັງບໍ່ທັນໄດ້ຮັບຜົນດີເທົ່າທີ່ຄວນເນື່ອງຈາກບັນຫາຕ່າງໆດັ່ງລຸ່ມນີ້:




1. ໄກ່ບໍ່ໄດ້ກິນອາຫານຢ່າງພຽງພໍ ຖືກປ່ອຍປະໃຫ້ໄປຫາກິນຕາມລຳພັງນອກຈາກໄກ່ກິນນ້ຳທີ່ເປິເປື້ອນ
2. ບໍ່ມີຄອກຢູ່ໄກ່ຈະຕາຍຍ້ອນຄວາມໜາວ, ຝົນ ແລະຖືກສັດຕູທຳລາຍ ຫຼືສັດປ່າອື່ນໆມາລັກກິນຢູ່ສະເໝີ
3. ພັນສັດທີ່ນຳມາລ້ຽງສ່ວນຫຼາຍເປັນພັນພື້ນເມືອງຂະໜາດນ້ອຍ , ໂຕບໍ່ໃຫຍ່ ແລະບໍ່ໃຫ້ໄຂ່ຫຼາຍ.

# 3 . ໄກ່ທີ່ໃຫ້ຜົນຜະລິດດີ

ເຮົາສາມາດເພີ່ມປະລິມານຊີ້ນ ແລະໄຂ່ທີ່ໄດ້ຈາກການລ້ຽງໄກ່ໂດຍ:

- ປັບປຸງຄຸນນະພາບພັນຂອງໄກ່ທີ່ມີຢູ່ ໂດຍມີການປະສົມພັນກັບພໍ່ພັນທີ່ດີ (ໃຫຍ່ໄວໃຫ້ໄຂ່ຫຼາຍ)
- ມີຄອກທີ່ດີໃຫ້ອາຫານທີ່ມີຄຸນນະພາບ ແລະໃຫ້ນ້ຳສະອາດຢ່າງພຽງພໍ. ເຮົາຄວນເອົາໄກ່ທີ່ໃຫຍ່ ແລະໃຫ້ຊີ້ນ ແລະໄຂ່ຫຼາຍທີ່ມີຢູ່ໃນທ້ອງຖິ່ນຂອງເຮົາມາລ້ຽງໃຫ້ອອກແມ່ແຜ່ລູກຕໍ່ໄປ.



**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ

# ຂໍ້ແນະນຳ

# ເຕັກນິກການລ້ຽງໄກ່ແບບພື້ນບ້ານ



ຈັດຕັ້ງປະຕິບັດໂດຍ: **CETDU**

(ໜ່ວຍງານພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ **(LEAP)**